# ບົດຮຽນໂຮງຮຽນວັນອາທິດ
## ວັນອາທິດ ທີ 2 ພຶສພາ 2021 (05-02-2021)

### ເລີ່ມຕົ້ນດ້ວຍການອະທິຖານ

*ທ່ານຮູ້ຜູ້ໃດທີ່ໃສ່ໃຈສິ່ງໃດສິ່ງນຶ່ງເອົາແທ້ເອົາວ່າ?*

**ຈຸດສຳຄັນໃນບົດຮຽນ:** ພຣະເຈົ້າຮຽກຮ້ອງເຮົາໃຫ້ອະທິຖານເພື່ອຄວາມພົ້ນຂອງຄົນອື່ນ.

**ພຣະຄັມພີຕອບສນອງຕໍ່ຊີວິດ.**

ການອະທິຖານຂອງຂ້າພະເຈົ້າໄດ້ຫຼຸດລົງແລະໄຫຼລ່ອງໄປນັບຕັ້ງແຕ່ໄດ້ເຊື່ອມາ. ຕອນທີ່ຂ້າພະເຈົ້າໄດ້ຮັບພຣະຄຣິດໃໝ່ໆ, ຂ້າພະເຈົ້າມີເວລາອະທິຖານຫຼາຍ. ຫຼັງຈາກນັ້ນ ຊີວິດກໍເລີ່ມຫຍຸ້ງຂຶ້ນຍ້ອນຄວາມຮັບຜິດຊອບທັງຫຼາຍທີ່ມີມານຳການແຕ່ງງານ, ລູກ, ການງານ, ແລະ ການຮັບໃຊ້. ເຖິງຢ່າງໃດກໍຕາມ, ຂ້າພຣະເຈົ້າຍັງອະທິຖານທຸກວັນ, ຊຶ່ງຕ້ອງໃຊ້ຄວາມພຍາຍາມເປັນພິເສດ. ຂ້າພະເຈົ້າຈຳໄດ້ວ່າມີຄວາມຮູ້ສຶກຍາກຂຶ້ນທີ່ຕ້ອງຖູໄຖກັບສິ່ງຈ່ອງດຶງຫຼາຍຢ່າງໃນການໃຊ້ເວລາກັບພຣະເຈົ້າ. ການສູ້ຊົນຂອງຂ້າພະເຈົ້າບໍ່ແມ່ນຍ້ອນຂາດກຳລັງໃຈ, ແຕ່ຕາຕະລາງທີ່ເຕັມອັດນັ້ນເຮັດໃຫ້ຂ້າພະເຈົ້າຕ້ອງໄດ້ເອົາໃຈໃສ່ເວລາການອະທິຖານເພີ່ມຂຶ້ນ. ບໍ່ມີແຕ່ຂ້າພະເຈົ້າຜູ້ດຽວ. ມີຫຼາຍຄົນພົບຄວາມຫຍຸ້ງຍາກກັບການອະທິຖານ. ນອກຈາກພຍາຍາມຍາດເວລາອະທິຖານງຽບໆແລ້ວ, ຍັງມີບັນຫາກັບສິ່ງທີ່ຕ້ອງອະທິຖານເພື່ອອີກ. ອະທິຖານເພື່ອຄວາມຕ້ອງການຂອງຕົນເອງກໍງ່າຍຢູ່, ແຕ່ການອະທິຖານເພື່ອສິ່ງອື່ນໆເດ? ພວກເຮົາສາມາດອະທິຖານເພື່ອຄົນອື່ນໄດ້ແນ່ນອນ, ແລະ ສຳລັບຄວາມຕ້ອງການທາງດ້ານຮ່າງກາຍແລ້ວ ພວກເຮົາຮູ້ແຈ່ມແຈ້ງແລ້ວວ່າຈະທູນຂໍສິ່ງໃດ. ແຕ່ພວກເຮົາຄວນອະທິຖານເພື່ອຄົນອື່ນໃນທາງອື່ນນຳແນ່ຊຶ່ງມັນບໍ່ແຈ່ມແຈ້ງດັ່ງຄວາມຕ້ອງການທາງດ້ານຮ່າງກາຍ.

ພວກເຮົາຄວນອະທິຖານເພື່ອຄວາມຕ້ອງການຝ່າຍວິນຍານຂອງຄົນອື່ນ, ແລະພວກເຮົາສາມາດເລີ່ມອະທິຖານດ້ວຍການອະທິຖານເພື່ອຄວາມລອດພົ້ນຂອງພວກເຂົາ.

**ພຣະຄັມພີກ່າວວ່າແນວໃດ :** (ເບິ່ງຕາມຂໍ້ 1, 2, ແລະ 3,)

### ການສຶກສາພຣະຄັມພີ

**1. <u>1 ຕີໂມທຽວ 2:1-2.</u>**

*1 ເຫດສັນນັ້ນກ່ອນສິ່ງອື່ນໃດ ເຮົາຂໍຮ້ອງເຈົ້າທັງຫຼາຍໃຫ້ອ້ອນວອນ, ໄຫວ້ວອນ, ທູນຂໍແລະຂອບພຣະຄຸນເພື່ອຄົນທັງປວງ.*
*2 ເພື່ອກະສັດທັງຫຼາຍ ແລະເພື່ອຄົນທັງປວງທີ່ມີຕຳແໜ່ງສູງ ເພື່ອເຮົາທັງຫຼາຍຈະໄດ້ດຳເນີນຊີວິດຢ່າງງຽບໆ*
*ແລະສງົບສຸກ ໃນທາງທັມແລະໂດຍສງ່າຜ່າເຜີຍທຸກຢ່າງ.*

ໃນຂໍ້ພຣະທັມເຫຼົ່ານີ້ ທ່ານໂປໂລເວົ້າເຖິງຄວາມສຳຄັນຂອງການອະທິຖານ. "ກ່ອນອື່ນ" ທ່ານໂປໂລໄດ້ເລີ່ມເນັ້ນໃຫ້ຕີໂມທຽວວ່າວຽກງານລຳດັບແລກຂອງໂບດແມ່ນອະທິຖານ. ການອະທິຖານບໍ່ຄວນຖືເປັນພຽງສິ່ງທີ່ພວກເຮົາໃຊ້ເລີ່ມສຶກສາພຣະຄັມພີຂອງກຸ່ມ ຫຼື "ເພີ່ມໃສ່" ລະຫວ່າງກາງແຕ່ລະເພງໃນເວລານະມັສການເທົ່ານັ້ນ. ດັ່ງທ່ານໂປໂລໄດ້ບອກຊາວໂກໂລຊາຍວ່າ: *ຈົ່ງໝັ້ນພຽນໃສ່ໃຈໃນການອ້ອນວອນ (ໂກໂລຊາຍ 4:2).* "ໃສ່ໃຈ" ເປັນຄຳທີ່ມີພລັງຮຽກຮ້ອງໃຫ້ເຮົາໝັ້ນພຽນອະທິຖານສືບຕໍ່ໄປ. ທ່ານໂປໂລໄດ້ເນັ້ນຄວາມໝັ້ນພຽນນີ້ເວລາທີ່ເພິ່ນໄດ້ບອກໃຫ້ຕີໂມທຽວນຳພາຄຣິສຕະຈັກອະທິຖານເປັນສິ່ງສຳຄັນອັນດັບແລກ.

ການອະທິຖານແມ່ນການສົນທະນາກັບພຣະເຈົ້າ, ແຕ່ ພວກເຮົາມັກເຮັດຫຼິ້ນແນໃສ່ຄວາມຮຽກຮ້ອງຕ້ອງການ

ຂອງຕົນເອງ. ເຖິງຢ່າງໃດກໍຕາມ ເປົ້າໝາຍສູງສຸດຂອງການອະທິຖານແມ່ນຕິດຕໍ່ກັບພຣະເຈົ້າ, ເພື່ອສແວງຫາພຣະອົງແລະປັນຍາຂອງພຣະອົງ. ເມື່ອໃດເຮົາເຮັດຢ່າງນັ້ນ, ພຣະອົງຊົງໄດ້ຮັບກຽດ ດ້ວຍວ່າການອະທິຖານຂອງເຮົາສອດຄ່ອງກັບນໍ້າພຣະທັຍຂອງພຣະອົງ.

ທ່ານໂປໂລໄດ້ຊີ້ໃຫ້ເຫັນການອະທິຖານຫຼາຍປະເພດ. "ການໄຫວ້ວອນ" (Petition) ແມ່ນການທູນຂໍຄວາມຕ້ອງການ. ໂດຍທົ່ວໄປ, "ການອະທິຖານ" ຂອງເຮົາແມ່ນນຳຄວາມຂໍຮ້ອງຫຼືຄວາມຄິດເຮົາສເນີຕໍ່ພຣະເຈົ້າ. "ການທູນຂໍ" (Intercession) ແມ່ນການອະທິຖານທີ່ເຮົານຳສເນີຕາງຄົນອື່ນ. ເຮົາຮູ້ສຶກເປັນກຽດທີ່ໄດ້ຂໍຮ້ອງ ແລະອະທິຖານຕາງຄົນອື່ນ. ແລະ "ການຂອບພຣະຄຸນ" (Thanksgiving) ຢໍ້າເຕືອນພວກເຮົາໃຫ້ຮູ້ຄຸນພຣະເຈົ້າຜູ້ທີ່ພຣະອົງຊົງເປັນແລະສິ່ງທີ່ພຣະອົງໄດ້ຊົງກະທຳທັງຊົງສາມາດກະທຳໄດ້. ທ່ານໂປໂລບໍ່ໄດ້ໃຫ້ລາຍການອະທິຖານເພື່ອອະທິຖານແບບໄຮ້ປໂຍດ, ແຕ່ ລາຍການຂອງເພິ່ນເນັ້ນເນື້ອໃນໃຈຄວາມຂອງການອະທິຖານໃຫ້ເຮົາຢ່າງກວ້າງຂວາງ. ການຮຽກຮ້ອງໃຫ້ອະທິຖານແມ່ນສິ່ງຈຳເປັນແທ້ໆອັນນຶ່ງທີ່ລວມເອົາທຸກສ່ວນຂອງຄຳອະທິຖານເຂົ້າກັນ.

ຈະບໍ່ເກີດຜົນດີຕໍ່ຊີວິດການອະທິຖານຂອງເຮົາ ຖ້າເຮົາສຸມການອະທິຖານໃສ່ພຽງເຣື່ອງດຽວ. ການອະທິຖານທີ່ເກີດຜົນຕ້ອງປະກອບດ້ວຍ ການໄຫວ້ວອນ, ການທູນຂໍ, ແລະການຂອບພຣະຄຸນ-ຄົບທຸກສ່ວນຂອງການອະທິຖານ.

*ທ່ານອາດນັບລະຍາຍຄວາມແຕກຕ່າງຂອງແຕ່ລະປະເພດການອະທິຖານຢູ່ໃນຂໍ້ພຣະຄັມພີເຫຼົ່ານີ້ຢ່າງໃດ?*

ພຣະເຢຊູໄດ້ມາໃນແຜ່ນດິນໂລກເພາະພຣະເຈົ້າຊົງຮັກໂລກ, ແລະຄາດຫວັງວ່າຜູ້ເຊື່ອຈະນຳເອົາພັນທະກິດຂອງພຣະອົງໄປສູ່ໂລກ. ທາງນຶ່ງທີ່ພວກເຮົາເຮັດໄດ້ແມ່ນໂດຍການອະທິຖານ. ບໍ່ວ່າເຮົາຈະເຫັນພ້ອມກັບຖານະທີ່ເຂົາເປັນຫຼືສິ່ງທີ່ເຂົາຍຶດໝັ້ນຢູ່ຫຼືບໍ່ກໍຕາມ, ພວກເຮົາຖືກເຕືອນໃຫ້ຖ່ອມຕົວລົງ ແລະທູນຂໍຄວາມກະຣຸນາຈາກພຣະບິດາແທນພວກເຂົາ. ເມື່ອເຮົາສຸມການອະທິຖານຂອງເຮົາ ໃສ່ຄວາມຕ້ອງການຝ່າຍວິນຍານຢ່າງຮີບດ່ວນເພື່ອໃຫ້ຄົນອື່ນຂຍັບເຂົ້າມາຫາພຣະເຈົ້າ, ຄວາມເມດຕາຂອງພຣະຄຣິດທີ່ມີຕໍ່ພວກເຂົາກໍຈະຫຼັ່ງໄຫຼມາສູ່ເຮົາໃຫ້ເກີດສົງສານເຂົາ.

ພວກເຮົາຄວນອະທິຖານດ້ວຍຄວາມເຫັນອົກເຫັນໃຈສຳລັບທຸກຄົນ-ແລະລວມທັງຜູ້ນຳຂອງເຮົາ. ເມື່ອພວກເຮົາອະທິຖານເພື່ອເຂົາ ຈົ່ງຈຳໄວ້ວ່າ ພຣະເຈົ້າໄດ້ມອບໝາຍໜ້າທີ່ນັ້ນໃຫ້ພວກເຂົາຮັບຜິດຊອບ. ພຣະເຈົ້າເປັນຜູ້ຄວບຄຸມ ແລະ ມີແຜນການສຳລັບຜູ້ປົກຄອງຂອງພວກເຮົາ (ໂຣມ 13:1-2). ທ່ານໂປໂລມີໃຈໃຫ້ການປະກາດເຜີຍແຜ່ຂ່າວປະເສີດເຣື່ອງພຣະເຢຊູຄຣິດໄປທົ່ວທຸກບ່ອນ. ທ່ານໂປໂລໄດ້ຂຽນພຣະຄັມພີໃນຍຸກການປົກຄອງຂອງເນໂຣ, ຜູ້ປົກຄອງທີ່ໂຫດຫ້ຽມຊຶ່ງໄດ້ກົດຂີ່ຂົ່ມເຫັງຄຣິສຕຽນເມື່ອຖືກຟ້ອງຮ້ອງ. ການເຕືອນຂອງທ່ານໂປໂລໃຫ້ອະທິຖານເພື່ອເຈົ້ານາຍແນ່ນອນຕ້ອງລວມທັງຄວາມລອດພົ້ນຂອງພວກເຂົາ, ການອະທິຖານນັ້ນຕ້ອງລວມທັງການອະທິຖານເພື່ອການນຳພາແລະນະໂຍບາຍຂອງເຂົາພ້ອມ. ສິ່ງທີ່ພວກຜູ້ນຳເຮັດອາດສົ່ງຜົນດີແກ່ການເຜີຍແຜ່ຂ່າວປະເສີດຢ່າງໃຫ່ຍຫຼວງ. ພວກເຮົາຄວນອະທິຖານເພື່ອພວກຜູ້ນຳ ເພາະວ່າສິ່ງທີ່ເຂົາເຮັດສາມາດຊ່ອຍເຮົາ "ດຳເນີນຊີວິດຢ່າງ ງຽບໆ ແລະ ສງົບສຸກໃນທາງທັມ ແລະໂດຍສງ່າຜ່າເຜີຍທຸກຢ່າງ" (ຂໍ້ 2).

## *2.* 1 ຕີໂມທຽວ 2:3-6.

*3 ການເຮັດແນວນັ້ນເປັນການດີ ແລະເປັນທີ່ຊອບພຣະທັຍພຣະເຈົ້າ ຜູ້ຊົງໂຜດໃຫ້ພົ້ນຂອງເຮົາທັງຫຼາຍ, 4 ຜູ້ຊົງມີພຣະປະສົງໃຫ້ຄົນທັງປວງພົ້ນ ແລະໃຫ້ສັງເກດຮູ້ຄວາມຈິງ. 5 ດ້ວຍເຫດວ່າມີພຣະເຈົ້າອົງດຽວແລະມີຜູ້ກາງແຕ່ຜູ້ດຽວລະຫວ່າງພຣະເຈົ້າກັບມະນຸດ ຄືພຣະເຢຊູຄຣິດຜູ້ຊົງສະພາບເປັນມະນຸດ, 6 ຜູ້ໄດ້ຊົງສລະພຣະອົງເອງເປັນຄ່າໄຖ່ສຳລັບຄົນທັງປວງ ຊຶ່ງການນີ້ເປັນພຍານໃນເວລາອັນເໝາະສົມ.*

ຂ້າພະເຈົ້າມີການປວດກ້າມເນື້ອສອງສາມເທື່ອຊຶ່ງຕ້ອງການ ການດູແລຈາກໝໍນວດ ຫຼືກາຍພາບບຳບັດ. ຈຸດປະສົງໃນການບຳບັດຂອງພວກເຂົາ ແມ່ນເພື່ອບັນເທົາຄວາມເຈັບປວດ ແລະປັບກ້າມເນື້ອໃຫ້ເຂົ້າທີ່. ຄວາມເຈັບປວດ

ເຫຼົ່ານັ້ນມັກພາໃຫ້ເກີດອາການຂັດເຄືອງຊໍາເຮື້ອ ຈົນກະທັ້ງສ່ວນເປ່ເພຂອງຮ່າງກາຍຖືກປັບໃຫ້ທ່ຽງຄືນຄືເກົ່າ.

ພວກເຮົາກໍຕ້ອງການ ການປັບຝ່າຍວິນຍານໃຫ້ທ່ຽງເໝືອນກັນ. ເປັນການດີໃນການກວດເບິ່ງເຮົາເອງ ເພື່ອໃຫ້ແນ່ໃຈວ່າສິ່ງທີ່ເຮົາຂໍອກາສແວງຈາກພຣະເຈົ້າຍັງຢູ່ໃນເສັ້ນທີ່ພຣະເຈົ້າປາຖນາ. ພຣະອົງ "ຢາກໃຫ້ທຸກຄົນພົ້ນ ແລະຮູ້ຄວາມຈິງ." ເພາະສະນັ້ນ ພວກເຮົາຄວນປັບການອະທິຖານຂອງເຮົາ ໃຫ້ສອດຄ່ອງກັບຄວາມປາຖນາຂອງພຣະອົງ ແລະ ອະທິຖານເພື່ອຄວາມພົ້ນຂອງຄົນອື່ນຢ່າງຈິງຈັງ.

*ຈະໃຫ້ຄວາມປາຖນາຂອງເຮົາສອດຄ່ອງກັບຄວາມປາຖນາຂອງພຣະເຈົ້າຢ່າງໃດໃນການອະທິຖານ?*

ຖານະຜູ້ເຊື່ອ ທ່ານເຄີຍພິຈາຣະນາຜົນກະທົບທີ່ທ່ານມີຕໍ່ຄົນອື່ນບໍ່? ເມື່ອເຮົາວາງໃຈພຣະທັດຂອງພຣະເຈົ້າທໍາງານຜ່ານການອະທິຖານຂອງເຮົາ, ພວກເຮົາຈະອະທິຖານໃນຖານະຂອງຕົວແທນ. ພວກເຮົາມີຄວາມພາກພູມໃຈໃນການອະທິຖານເພື່ອຜູ້ທີ່ພຣະເຈົ້າວາງໄວ້ຕາມເຂດຄວາມຮັບຜິດຊອບຂອງເຮົາ, ແລະການອະທິຖານຢ່າງນັ້ນ ເປັນທີ່ພໍພຣະທັຍພຣະເຈົ້າ.

ພວກເຮົາສາມາດຮູ້ວ່າຄວາມປາຖນາຂອງພຣະເຈົ້າແມ່ນເພື່ອທຸກຄົນໄດ້ພົ້ນ ເພາະວ່າ "ມີພຣະເຈົ້າອົງດຽວ"(ຂໍ້ 5). ໃນເມື່ອມີພຣະເຈົ້າອົງດຽວ, ພຣະອົງຊົງມີພຣະປະສົງແລະຄວາມປາຖນາດຽວ. ຄວາມປາຖນາຂອງພຣະອົງບໍ່ແມ່ນເພື່ອໃຊ້ກັບຊາວຢິວເທົ່ານັ້ນ ແຕ່ເພື່ອທຸກຄົນທີ່ພຣະອົງຊົງສ້າງມາຕາມຮູບຮ່າງຂອງພຣະອົງ. ພຣະເຈົ້າຍັງໄດ້ເຮັດໃຫ້ຄວາມພົ້ນນັ້ນມີມາໂດຍຜ່ານ "ຜູ້ກາງແຕ່ຜູ້ດຽວຣະຫວ່າງພຣະເຈົ້າກັບມະນຸດ, ຄືພຣະເຢຊູຄຣິດ." ວັທນາທັມຂອງເຮົາກ່າວວ່າທາງໄປຫາພຣະເຈົ້າມີຫຼາຍທາງ. ແຕ່ ພຣະເຈົ້າປະທານທາງດຽວສູ່ຄວາມສັມພັນກັບພຣະອົງ. ຄວາມພົ້ນໄດ້ມາໂດຍທາງພຣະເຢຊູແລະພຣະຄຣິດອົງດຽວ "ຜູ້ໄດ້ຊົງສລະພຣະອົງເອງເປັນຄ່າໄຖ່ສໍາລັບທຸກຄົນ" (ຂໍ້ 6). ພາຣະກິດຄວາມພົ້ນຂອງພຣະຄຣິດມີໄວ້ສໍາລັບທຸກຄົນ.

ພວກເຮົາສາມາດເປັນຕົວແທນການປ່ຽນແປງຊີວິດ ຂນະທີ່ພວກເຮົາວາງຕົວໃຫ້ສອດຄ່ອງກັບຄວາມປາຖນາຂອງພຣະເຈົ້າ, ດ້ວຍຄວາມຕັ້ງໃຈອະທິຖານເພື່ອຄົນອື່ນໃຫ້ຮູ້ແລະຮັບເອົາອົງພຣະເຢຊູຄຣິດ. ພວກເຮົາຄວນເປັນຄົນຂຍັນແລະສວຍເອົາທຸກໆໂອກາດຢ່າງເຕັມສ່ວນໃນສ່ວນທີ່ພວກເຮົາໄດ້ຖືກມອບໃຫ້. ໂດຍຜ່ານທາງຄໍາອະທິຖານຂອງເຮົາ, ພວກເຮົາຮ່ວມມືກັບພຣະເຈົ້າໃນການຂຍາຍຣາຊອານາຈັກຂອງພຣະອົງ.

## 3.1ຕີໂມທຽວ 2:7-8.

*7 ແລະສໍາລັບການນີ້ເຮົາຈຶ່ງໄດ້ຖືກຊົງຕັ້ງໄວ້ໃຫ້ເປັນຜູ້ປະກາດແລະເປັນອັຄສາວົກ (ເຮົາກ່າວຄວາມຈິງ ບໍ່ໄດ້ກ່າວຄໍາ*
*ຕົວະ) ແລະເປັນຄູສອນຄວາມເຊື່ອແລະຄວາມຈິງແກ່ຄົນຕ່າງຊາດ.*
*8 ເຫດສັນນັ້ນເຮົາປະສົງຢາກໃຫ້ຜູ້ຊາຍທັງຫຼາຍ-*
*ໄຫວ້ວອນໃນທຸກແຫ່ງ ດ້ວຍຍົກມືບໍຣິສຸດ ໂດຍບໍ່ມີຄວາມຄຽດ ແລະການຜິດຖຽງກັນ.*

ທ່ານໂປໂລໄດ້ບອກໃຫ້ເຮົາຮູ້ວ່າເພິ່ນຖືກແຕ່ງຕັ້ງໃຫ້ເປັນຜູ້ສອນຄວາມຈິງຊຶ່ງເພິ່ນກ່າວໄວ້ໃນຂໍ້ 5-6:ຂ່າວປະເສີດ. ເພິ່ນໄດ້ຮັບມອບໝາຍໃຫ້ເທສນາແກ່ຄົນຕ່າງຊາດເຖິງຄວາມຮັກແລະການໄຖ່ຂອງພຣະເຈົ້າສໍາລັບທຸກຄົນ. ທ່ານໂປໂລບໍ່ໄດ້ໄປຫາສະເພາະຊາວຢິວກຸ່ມດຽວ; ແທນທີ່ຈະເຮັດດັ່ງນັ້ນ, ພຣະວິນຍານບໍຣິສຸດໄດ້ນໍາພາເພິ່ນກ້າວສູ່ວັທນາທັມຂອງຄົນຕ່າງຊາດເພື່ອເຜີຍແຜ່ຄວາມຈິງກ່ຽວກັບພຣະເຢຊູ ຢ່າງດຽວກັນກັບຂ່າວດີທີ່ເພິ່ນເຜີຍແຜ່ກັບຊາວຢິວ.

ຂໍ້ 8 ເລີ່ມຕົ້ນດ້ວຍຄວາມຄິດໃໝ່ຂອງທ່ານໂປໂລ, ແຕ່ຂໍ້ຕໍ່ມາແມ່ນອີງໃສ່ສິ່ງທີ່ເພິ່ນໄດ້ຂຽນໄວ້ໃນເຈັດຂໍ້ທໍາອິດ. ເພິ່ນເລີ່ມດ້ວຍ "ເຫດສັນນັ້ນ" ມີຄວາມໝາຍວ່າ "ອີງຕາມສິ່ງທີ່ຂ້າພະເຈົ້າໄດ້ຂຽນໄວ້, ນີ້ແມ່ນສິ່ງທີ່ທ່ານຕ້ອງທໍາ." ຄໍາແນະນໍາຂອງເພິ່ນໃນຂໍ້ 8-15 ແມ່ນສໍາລັບທັງຊາຍແລະຍິງ ແຕ່ເພິ່ນເລີ່ມດ້ວຍຜູ້ຊາຍກ່ອນ.

*ເຫດໃດການອະທິຖານຈຶ່ງເປັນບາດກ້າວສໍາຄັນໃນການເຜີຍແຜ່ຂ່າວປະເສີດ?*

ທ່ານໂປໂລໄດ້ເນັ້ນໃຫ້ສຸມໃສ່ການອະທິຖານ, ແລະເພິ່ນໄດ້ບອກບັນດາຜູ້ຊາຍວ່າພວກເຂົາຄວນອະທິຖານຢ່າງໃດ: *"ເຫດສັນນັ້ນເຮົາປະສົງຢາກໃຫ້ຜູ້ຊາຍທັງຫລາຍໄຫວ້ວອນໃນທຸກແຫ່ງ ດ້ວຍຍົກມືບໍຣິສຸດໂດຍບໍ່ມີຄວາມຄຽດ ແລະການຜິດຖຽງກັນ"(ຂໍ້ 8).* ນີ້ບໍ່ແມ່ນເນັ້ນໃສ່ທ່າທີການອະທິຖານ, ແຕ່ເນັ້ນໃສ່ບົດບາດຂອງເຮົາ. ຈະມີມືບໍຣິສຸດຕ້ອງມີສິລທັມສະອາດ. ທ່ານໂປໂລໄດ້ບອກພວກເຮົາໃຫ້ *"ດຳເນີນຊີວິດຢ່າງງຽບໆ ແລະສງົບສຸກ ໃນທາງທັມແລະໂດຍສງ່າຜ່າເຜີຍທຸກຢ່າງ"(ຂໍ້ 2),* ສະນັ້ນເພື່ອໃຫ້ສິລທັມສະອາດໂດຍບໍ່ມີການຜິດຖຽງກັນທ່າມກາງພວກເຮົາ ແນ່ນອນຕ້ອງໄດ້ຊ່ອຍກັນເຮັດໃຫ້ພຣະທັມຂ່າວປະເສີດໄດ້ຮັບການຍອມຮັບຈາກຄົນອື່ນ.

ຍ້ອນວ່າ ພວກເຮົາຈະໄດ້ປະເຊີນກັບຄວາມຫຍຸ້ງຍາກນາໆປະການ, ພວກເຮົາຕ້ອງເປັນ "ຄົນໜ້າສັຣເສີນ". ພວກເຮົາບໍ່ສາມາດດຳເນີນຊີວິດ, ດຶງດູດ, ຫຼືເປັນພຍານຕໍ່ໂລກດ້ວຍຄວາມສາມາດຂອງເຮົາເອງ. ຫົວໃຈຂອງການອະທິຖານແມ່ນການເພິ່ງພຣະວິນຍານບໍຣິສຸດເປັນຜູ້ປະທານຣິດອຳນາດໃນການເປັນພຍານ. ຄວາມຈິງສີ່ຢ່າງໂພ່ຂຶ້ນມາໃນບົດນີ້-ສີ່ທາງທີ່ພວກເຮົາສາມາດອະທິຖານ:

1. ພວກເຮົາຄວນອະທິຖານເພື່ອທຸກຄົນ: ຄອບຄົວ, ໝູ່ເພື່ອນ, ສັດຕຣູ, ແລະ ຜູ້ປົກຄອງ.
2. ພວກເຮົາຄວນອະທິຖານໃຫ້ຄົນມາຮັບເຊື່ອໃນພຣະຄຣິດ. ແມ່ນກະທັ້ງເວລາເຮົາອະທິຖານເພື່ອພວກເຂົາໃນທາງອື່ນ, ຈຸດເນັ້ນຂອງເຮົາແມ່ນແນໃສ່ໃຫ້ສອດຄ່ອງກັບຄວາມປາຖນາຂອງພຣະເຈົ້າ ຄືເພື່ອເຂົາຈະໄດ້ປະສົບຄວາມພົ້ນຂອງພຣະອົງ.
3. ພວກເຮົາຄວນອະທິຖານດ້ວຍຄວາມໝັ້ນໃຈເພື່ອຄວາມພົ້ນຂອງເຂົາ ເພາະວ່າ ພຣະຄຣິດໄດ້ຈ່າຍຄ່າໄຖ່ໃຫ້ເຂົາໂດຍທາງການສິ້ນພຣະຊົນຂອງພຣະອົງ.
4. ພວກເຮົາຄວນອະທິຖານເພື່ອເຮົາເອງ ແລະຜູ້ອື່ນທີ່ເຜີຍແຜ່ຂ່າວປະເສີດ-ທຸກຄົນທີ່ຖືກເອີ້ນໃຫ້ເປັນຜູ້ "ນຳຂ່າວປະເສີດ" ຄວາມຈິງຂອງພຣະຄຣິດ.

*ມີທາງໃດແດ່ທີ່ກຸ່ມຂອງເຮົາສາມາດປະກາດເພີ່ມຂຶ້ນໃນການອະທິຖານຂອງເຮົາ?*

## ນຳໃຊ້ໃນຊີວິດ

ທ່ານຈະເອົາການອະທິຖານເຂົ້າສູ່ການປະຕິບັດຢ່າງໃດເພື່ອຄວາມພົ້ນຂອງຄົນອື່ນ? ຈົ່ງເລືອກນຶ່ງໃນການນຳໃຊ້ຕໍ່ລົງໄປນີ້:

- **ຈັດເວລາ.** ຈົ່ງຕັ້ງເວລາແຕ່ລະວັນເພື່ອການອະທິຖານເຈາະຈົງ. ພວກເຮົາມີນັດທັງວັນແລະຕັ້ງໃຈຕອບສນອງຕໍ່ການນັດນີ້ທຸກໆວັນ.
- **ເຮັດບັນຊີ.** ຈົ່ງເລີ່ມບັນທຶກການອະທິຖານ, ຈົດລາຍຊື່ບຸກຄົນສະເພາະທີ່ທ່ານອະທິຖານເພື່ອຄວາມພົ້ນຂອງເຂົາ. ລວມທັງລາຍຊື່ຜູ້ປົກຄອງນຳ.
- **ຕິດຕໍ່.** ພຣະເຈົ້າມັກຈະໃຊ້ເຮົາຫຼາຍກວ່າການອະທິຖານເທົ່ານັ້ນ; ພຣະອົງໃຊ້ເຮົາເຂົ້າໃນຄຳຕອບ. ເມື່ອພຣະເຈົ້າໃຫ້ໂອກາດທ່ານ, ຈົ່ງໂອ້ລົມກັບຜູ້ທີ່ທ່ານອະທິຖານເພື່ອ. ຈົ່ງວາງໃຈວ່າພຣະເຈົ້າຈະໃຫ້ຄຳເວົ້າແກ່ທ່ານໃນການແບ່ງປັນພຣະຄຣິດ.

ການອະທິຖານບາງເຣື່ອງເບິ່ງຄືວ່າຍາກກວ່າເຣື່ອງອື່ນບາງເຣື່ອງ; ພວກເຮົາມັກຄິດເຖິງຕົວເອງກ່ອນເລື້ອຍໆ. ແຕ່ພວກເຮົາຄວນອະທິຖານສຳລັບຄວາມຕ້ອງການຝ່າຍວິນຍານຂອງຄົນອື່ນ, ແລະເລີ່ມອະທິຖານເພື່ອຄວາມພົ້ນຂອງພວກເຂົາ.

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org ໂດຍ PSI**